**ຄໍາຖາມທີ່ມັກຖາມສໍາລັບບຸກຄົນທີ່ສົນໃຈໃນການເປັນອາສາສະໝັກ**

**ຊ່ວຍເຫຼືອໃນກິດຈະກໍາການຕອບໂຕ້ເຫດນໍ້າມັນຮົ່ວໄຫຼເພື່ອຊ່ວຍເຫຼືອສັດປ່າ**

**U.S. Fish and Wildlife Service**

**ມິຖຸນາ 2010**

**Q1: ມີກິດຈະກໍາປະເພດໃດແດ່ທີ່ຕ້ອງການອາສາສະໝັກໃນປະຈຸບັນນີ້?**

A.1. ໃນປະຈຸບັນ, ພວກເຮົາຕ້ອງການອາສາສະໝັກທີ່ມີຄວາມສາມາດໃນຫຼາກຫຼາຍວຽກງານນັບຈາກການອະນາໄມຫາດຊາຍໄປຈົນເຖິງການຟື້ນຟູສັດປ່າ ເພື່ອມາຊ່ວຍເຫຼືອໃນຄວາມພະຍາຍາມຕອບໂຕ້ເຫດນໍ້າມັນຮົ່ວໄຫຼ. ໂອກາດເປັນອາສາສະໝັກອາດຈະມີການປ່ຽນແປງໃນເວລາຕໍ່ໄປພາຍຫຼັງເຊິ່ງຂຶ້ນກັບຄວາມເສຍຫາຍຈາກຄາບນໍ້າມັນ ແລະສະຖານທີ່ເກີດເຫດ. ພວກເຮົາຂໍແນະນໍາໃຫ້ທ່ານຕິດຕາມເບິ່ງໜ້າເວັບຂອງສູນບັນຊາການລວມ [Unified Command] ຢ່າງເປັນປະຈໍາເພື່ອເບິ່ງຂໍ້ມູນໃໝ່ລ້າສຸດກ່ຽວກັບປະເພດການຊ່ວຍເຫຼືອທີ່ຕ້ອງການ. (http://www.deepwaterhorizonresponse.com/go/site/2931/)

**Q2. ອາສາສະໝັກພິເສດປະເພດໃດແດ່ທີ່ສາມາດໃຫ້ການຊ່ວຍເຫຼືອໂດຍກົງຕໍ່ກັບສັດປ່າທີ່ໄດ້ຮັບຜົນກະທົບຢູ່ບັນດາສູນຟື້ນຟູສັດປ່າທີ່ຖືກຜົນກະທົບຈາກນໍ້າມັນ [Oiled Wildlife Centers]?**

**A.2.** ມີພຽງແຕ່ອົງການ **Tri-State Bird Rescue & Research** ເທົ່ານັ້ນທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນການດູແລຟື້ນຟູສັດປ່າສໍາລັບເຫດການນີ້. ຄວາມຕ້ອງການອັນຮີບດ່ວນທີ່ສຸດໃນຕອນນີ້ແມ່ນການກໍານົດຕົວບັນດາອາສາສະໝັກທີ່ເປັນໄປໄດ້ທີ່ມີຄຸນສົມບັດເປັນ 'ຜູ້ຊ່ວຍຜູ້ຊ່ຽວຊານມືອາຊີບ" ທີ່ມີປະສົບການດ້ານສັດປ່າຢ່າງນ້ອຍ **6** ເດືອນ, ການຝຶກອົບ **HAZMAT** ຢ່າງນ້ອຍ **4** ຊົ່ວໂມງ ແລະ ເຄີຍໄດ້ຮັບການສັກຢາປ້ອງກັນໂລກໝາວໍ້ ທີ່ສາມາດຊ່ວຍເຫຼືອອົງການ **Tri-State** ຢູ່ບັນດາສູນຟື້ນຟູສັດປ່າທີ່ຖືກຜົນກະທົບຈາກນໍ້າມັນ. ຜູ້ຊ່ວຍຜູ້ຊ່ຽວຊານມີນິຍາມຄວາມໝາຍເປັນບຸກຄົນຜູ້ທີ່:

1. ມີເປັນເຈົ້າຂອງ, ຫຼື ເຮັດວຽກໂດຍກົງພາຍໃຕ້ບຸກຄົນຜູ້ທີ່ມີ, ໃບອະນຸຍາດ ຫຼື ການອຸນະຍາດທີ່ຍັງໃຊ້ໄດ້ທີ່ກ່ຽວຂ້ອງກັບປະເພດສັດທີ່ຈະເຮັດວຽກກັບ;
2. ເປັນສະມາຊິກຂອງອົງການສັດປ່າໃດໜຶ່ງທີ່ເຮັດວຽກພາຍໃນຂະແໜງສາຂາສັດປ່າຂອງລະບົບບັນຊາການໃນສະຖານະການ [Incident Command Structure (ICS)], ຫຼື ເປັນພະນັກງານຂອງອົງການດູແລສັດປ່າ [wildlife Trustee agency];
3. ຕົກລົງເຫັນດີເຮັດວຽກພາຍໃຕ້, ແລະ ປະຕິບັດຕາມ, ເອກະສານການວາງແຜນທີ່ເໝາະສົມທີ່ສ້າງຂຶ້ນໂດຍສູນບັນຊາການລວມສູນ [Unified Command] (ເຊັ່ນວ່າແຜນຄວາມປອດໄພຢູ່ສະຖານທີ່ເກີດເຫດ, ແຜນປະຕິບັດງານເມື່ອເກີດເຫດ, ຂໍ້ກໍານົດດ້ານການປະຊາສໍາພັນ, ແລະອື່ນໆ) ແລະ
4. ມີຄວາມຮູ້ ແລະ ປະສົບການໃນການເຮັດວຽກ (ຢ່າງນ້ອຍ 3 ເດືອນ) ໂດຍມີພິທີການທົ່ວໄປ, ລະບຽບຂັ້ນຕອນ ແລະ ຄວາມປອດໄພທີ່ກ່ຽວຂ້ອງກັບການເຮັດວຽກຕໍ່ກັບປະເພດສັດທີ່ກ່ຽວຂ້ອງ.

ນອກນັ້ນ, ພະຍາບານທີ່ໄດ້ຈົດທະບຽນທີ່ຜ່ານການຝຶກອົບຮົມ BP ແມ່ນຍິ່ງເປັນທີ່ຕ້ອງການສໍາລັບເປັນອາສາສະໝັກຂອງສູນຟື້ນຟູສັດປ່າ.

**Q3. ຂ້ອຍຄວນຕິດຕໍ່ຫາໃຜຖ້າຂ້ອຍພ້ອມເປັນອາສາສະໝັກ ແລະ ມີທັກສະທີ່ຕ້ອງການ?**

A3. ກະລຸນາ ສອບຖາມ ຫຼື ໂທຫາໂດຍກົງເພື່ອພົວພັນເລື່ອງຄວາມສົນໃຈຂອງທ່ານໃນການສະໜອງການຊ່ວຍເຫຼືອດ້ານສັດປ່າຫາ **fw4ppc@fws.gov** ຫຼື ໂທຫາເບີ 404/679-7049. ຂໍ້ຄວາມຂອງທ່ານຕ້ອງປະກອບມີຊື່ຂອງທ່ານ; ທີ່ຢູ່ເຊິ່ງປະກອບມີເມືອງ ແລະ ລັດ, ເບີໂທລະສັບ (ເບີມືຖືຍິ່ງດີ ແລະ ບັນດາເບີປ່ຽນແທນ); ທີ່ຢູ່ອີເມວ; ທ່ານເຕັມໃຈຈະເດີນທາງໄກສໍ່າໃດ; ເມື່ອໃດ ແລະ ເປັນເວລາດົນປານໃດທີ່ທ່ານພ້ອມຈະໃຫ້ການຊ່ວຍເຫຼືອ; ແລະ ທ່ານມີປະສົບການສະເພາະພິເສດກັບປະເພດສັດໃດໜຶ່ງຫຼືບໍ່, ເຊັ່ນວ່າ ນົກເປັດນໍ້າ, ນົກອິນຊີ, ນົກທະເລ, ນົກນໍ້າ, ແລະອື່ນໆ. ນອກນັ້ນ ມັນຍັງຈະເປັນປະໂຫຍດໃນການຮູ້ວ່າທ່ານເປັນສັດຕະວະແພດ ຫຼື ສັດຕະວະແພດສັດປີກ, ວິຊາການດ້ານການປິ່ນປົວສັດ, ຫຼື ນັກຟື້ນຟູສັດຕາມລະດູການ.

**Q4. ຈໍາເປັນຕ້ອງມີການຝຶກອົບຮົມພິເສດເພື່ອເປັນອາສາສະໝັກໃນວຽກງານຕອບໂຕ້ເຫດນໍ້າມັນຮົ່ວໄຫຼສໍາລັບການເຮັດອະນາໄມຫາດຊາຍ, ການສໍາຫຼວດນົກ ຫຼື ຖ້າຂ້ອຍແມ່ນຜູ້ຊ່ວຍຜູ້ຊ່ຽວຊານດ້ານສັດປ່າທີ່ມີຄຸນສົມບັດຄົບຖ້ວນ?**

A4. ແມ່ນແລ້ວ, ບໍລິສັດ BP ກໍານົດໃຫ້ອາສາສະໝັກໃນການຕອບໂຕ້ເຫດນໍ້າມັນຮົ່ວໄຫຼ ແລະຜູ້ເປັນຜູ້ຊ່ວຍຜູ້ຊ່ວຍຊານທຸກຄົນຕ້ອງສໍາເລັດການຝຶກອົບຮົມດ້ານຄວາມປອດໄພຢູ່ສະຖານຝຶກອົບຮົມຕົວຈິງທີ່ສະໜອງໃຫ້ຢູ່ທົ່ວເຂດຊາຍຝັ່ງອ່າວທະເລ. ກະລຸາ ໂທຫາສາຍດ່ວນການຝຶກອົບຮົມທີ່ເບີ 1-866-647-2338 ເພື່ອຂໍຂໍ້ມູນເພີ່ມເຕີມກ່ຽວກັບຕາຕະລາງການຝຶກອົບຮົມ ຫຼື ເພື່ອຈົດຊື່ເຂົ້າຝຶກອົບຮົມ.

ຫຼື, ຖ້າທ່ານຕ້ອງການ, ທ່ານສາມາດເຂົ້າຮ່ວມການຝຶກອົບຮົມດ້ານຄວາມປອດໄພທາງອອນລາຍຂອງບໍລິສັດ BP ໂດຍການເຂົ້າຫາ https://www2.virtualtrainingassistant.com/BPPublic/wc.dll?learner~cmenu ພວກເຮົາມີການເສັງທົດສອບໃນຕອນທ້າຍຂອງການຝຶກອົບຮົມ, ແລະ ທ່ານຕ້ອງຜ່ານດ້ວຍຄະແນນ 80% (ທ່ານຈະໄດ້ມີໂອກາດລອງສາມຄັ້ງ). ກະລຸນາ ພິມໃບຢັ້ງຢືນອອກແລະເອົາຕິດຕົວໄປນໍາ ຖ້າທ່ານຖືກຈັດໃຫ້ໄປຊ່ວຍເຫຼືອຢູ່ສູນຟື້ນຟູສັດປ່າທີ່ຖືກຜົນກະທົບຈາກນໍ້າມັນໃດໜຶ່ງ ຫຼື ສະຖານທີ່ອື່ນ. ຖ້າທ່ານມີຄວາມຫຍຸ້ງຍາກດ້ານ IT, ທ່ານສາມາດໂທຫາສາຍດ່ວນດ້ານການຝຶກອົບຮົມທີ່ໄດ້ບອກໄວ້ຢູ່ຂ້າງເທິງເພື່ອຂໍຄວາມຊ່ວຍເຫຼືອ.

**Q5: ຂ້ອຍຢາກເປັນອາສາສະໝັກເພື່ອຊ່ວຍເຫຼືອໃນວຽກງານຕອບໂຕ້ເຫດນໍ້າມັນຮົ່ວໄຫຼ, ແຕ່ປະຈຸບັນຂ້ອຍບໍ່ມີການຝຶກອົບຮົມສະເພາະພິເສດ. ຂ້ອຍສາມາດລົງທະບຽນເປັນອາສາສະໝັກໄດ້ແນວໃດ?**

A5. ຄະນະກໍາມະການບໍລິການສາທະນະແຫ່ງລັດລຸຍເຊັຍນາ [Louisiana Serve Commission] ກໍາລັງຊ່ວຍລະດົມ ແລະ ຝຶກອົບຮົມອາສາສະໝັກໃນການຕອບໂຕ້ເຫດນໍ້າມັນຮົ່ວໄຫຼ. ການເຮັດອະນາໄມຢ່າງຈິງຈັງກໍາລັງຖືກດໍາເນີນການເພື່ອສະກັດກັ້ນແຫຼ່ງການຮົ່ວໄຫຼ, ຟື້ນຟູຄາບນໍ້າມັນທີ່ຮົ່ວໄຫຼ ແລະ ປົກປ້ອງສະຖານຕ່າງໆທີ່ມີຄວາມອ່ອນໄຫວທາງດ້ານສິ່ງແວດລ້ອມ. ນໍ້າມັນແມ່ນສານທີ່ເປັນພິດ ແລະ ອັນຕະລາຍ ຖ້າຈັດການກັບມັນຢ່າງບໍ່ຖືກຕ້ອງ. ມີພຽງ

ແຕ່ຜູ້ຕອບໂຕ້ທີ່ຜ່ານການຝຶກອົບຮົມມາເປັນພິເສດເທົ່ານັ້ນທີ່ສາມາດເຮັດອະນາໄມ ຫຼື ກຳຈັດຖິ້ມພວກມັນ. ທ່ານຕ້ອງມີອາຍຸຢ່າງນ້ອຍ 18 ປີ, ສາມາດປະຕິບັດຕາມທັງຄຳແນະນຳທີ່ເປັນລາຍລັກອັກສອນ ແລະເປັນຄຳເວົ້າ, ແລະຕອບສະໜອງໄດ້ທັງຂໍ້ກຳນົດດ້ານການຝຶກອົບຮົມ ແລະ ດ້ານຮ່າງກາຍສຳລັບໜ້າວຽກທີ່ທ່ານຕ້ອງການເປັນອາສາສະໝັກ.

ຖ້າທ່ານສົນໃຈຢາກໄດ້ຮັບການຝຶກອົບຮົມພິເສດເພື່ອຊ່ວຍການເລື່ອງການອະນາໄມຄາບນ້ຳມັນ, ກະລຸນາລົງທະບຽນໄດ້ທີ່ www.volunteerlouisiana.gov ຫຼື ໂທຫາ 1-866-448-5816 ເພື່ອຂໍຂໍ້ມູນເພີ່ມເຕີມກ່ຽວກັບໂອກາດເປັນອາສາສະໝັກຕາມທີ່ພວກມັນປະກົດມີ.

ກະລຸນາ ຮັບຊາບວ່າມີພຽງແຕ່ສູນບັນຊາການລວມສູນ [Unified Command] ມີອຳນາດທາງກົດໝາຍໃນການຕັດສິນໃຈເລື່ອງການນຳໃຊ້ອາສາສະໝັກໃຂເຂດພື້ນທີ່ທີ່ຖືກຜົນກະທົບຈາກການຮົ່ວໄຫຼຂອງນ້ຳມັນ. ຂໍ້ມູນໃໝ່ສຸດກ່ຽວກັບຄວາມພະຍາຍາມເຮັດອະນາໄມເຫດນ້ຳມັນຮົ່ວໄຫຼ ແລະ ໂອກາດເປັນອາສາສະໝັກແມ່ນຕິດປະກາດຢູ່: http://www.deepwaterhorizonresponse.com/go/site/2931/. ການຕັດສິນໃຈຂອງສູນ Unified Command ໃນການຮັບເອົາ, ຝຶກອົບຮົມ ແລະ ສົ່ງອາສາສະໝັກໄປປະຕິບັດວຽກແມ່ນຂຶ້ນຢູ່ກັບສະຖານທີ່ ແລະ ຂະໜາດຂອງຄາບນ້ຳມັນທີ່ຮົ່ວໄຫຼ, ຍຸດທະສາດການເຮັດອະນາໄມທີ່ເໝາະສົມ ແລະ ປັດໃຈດ້ານຄວາມປອດໄພ.

ນອກນັ້ນ ທ່ານຍັງສາມາດລົງທະບຽນທທາງອອນລາຍ ຖ້າທ່ານແມ່ນຜູ້ຢູ່ອາໃສຂອງໜຶ່ງໃນບັນດາລັດເຂດຊາຍຝັ່ງອ່າວທະເລ ຜ່ານທາງເວັບໄຊຂອງເຂົາເຈົ້າທີ່:

- ລັດ: http://www.servealabama.gov/2010/default.aspx
- ລັດ: http://www.volunteerfloridadisaster.org/
- ລັດ: http://www.volunteerlouisiana.gov/
- ລັດ: http://www.volunteermississippi.org/1800Vol/OpenIndexAction.do

ນອກນັ້ນ, ສູນອະນຸລັກລະບົບນິເວດແຫ່ງຊາດ [National Audubon Society] ກໍ່ກຳລັງຮັບສະໝັກອາສາສະໝັກເພື່ອມາຊ່ວຍເຫຼືອໃນວຽກງານນີ້ເຊັ່ນກັນ. ຂໍ້ມູນກ່ຽວກັບການສະໝັກແມ່ນມີຢູ່ທີ່ http://www.audubonaction.org/site/Survey?ACTION_REQUIRED=URI_ACTION_USER_REQUESTS&SURVEY_ID=3400.

**Q6: ຂ້ອຍອາໃສຢູ່ໃກ້ເຂດຮັກສາພັນສັດປ່າແຫ່ງຊາດ [National Wildlife Refuge] ໃນເຂດຊາຍຝັ່ງອ່າວທະເລ ແລະ ຕ້ອງການສະໜັບສະໜູນວຽກງານຕອບໂຕ້ເຫດນ້ຳມັນຮົ່ວໄຫຼ. ຂ້ອຍສາມາດເປັນອາສາສະໝັກໄດ້ແນວໃດ?**

A6. ຫຼາຍເຂດຮັກສາພັນສັດປ່າແຫ່ງຊາດທີ່ຢູ່ລຽບຊາຍຝັ່ງທະເລໃນລັດ Louisiana, Alabama ແລະ Florida ລ້ວນແຕ່ມີໂຄງການອາສາສະໝັກ ແລະ ໂຄງການກຸ່ມຊ່ວຍເພື່ອນ [Friends groups] ທີ່ດຳເນີນງານຢູ່. ຖ້າທ່ານສົນໃຈໃນການເປັນອາສາສະໝັກຊ່ວຍເຫຼືອພະນັກງານເຂດຮັກສາພັນສັດປ່າ ແລະ ກຸ່ມ Friend groups, ກະລຸນາ ຕິດຕໍ່ຫາ

ຫ້ອງການເຂດຮັກສາພັນສັດປ່າໃກ້ບ້ານທ່ານເພື່ອຂໍເອົາຂໍ້ມູນກ່ຽວກັບໂອກາດເປັນອາສາສະໝັກໃດແດ່ທີ່ມີຢູ່ໃນປະຈຸບັນ. ທ່ານສາມາດຊອກຫາຫ້ອງການເຂດຮັກສາພັນສັດປ່າທີ່ໃກ້ບ້ານທ່ານໄດ້ໂດຍການເຂົ້າເບິ່ງທີ່ http://www.fws.gov/southeast/refuges/refuges-by-state.html#choose

**Q7. ຂ້ອຍແມ່ນສະມາຊິກຂອງກຸ່ມຊ່ວຍເພື່ອນ [Friends Group] ຫຼື ເປັນອາສາສະໝັກໃຫ້ເຂດຮັກສາພັນສັດປ່າ [National Wildlife Refuge] ທີ່ບໍ່ຕັ້ງຢູ່ແຄມຊາຍຝັ່ງອ່າວທະເລ. ຂ້ອຍສາມາດຊ່ວຍໃນຄວາມພະຍາຍາມຕອບໂຕ້ເຫດນ້ຳມັນຮົ່ວໄຫຼ FWS ໄດ້ແນວໃດ?**

A7. ອົງການ FWS ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ກັບການສະໜັບສະໜູນທີ່ກຸ່ມ Friends groups ແລະ ອາສາສະໝັກໄດ້ສະໜອງໃຫ້ເປັນເວລາຫຼາຍປີ. ຄຳແນະນຳໜຶ່ງແມ່ນວ່າໃຫ້ທ່ານໂອ້ລົມກັບຜູ້ຈັດການ ແລະ ພະນັກງານເຂດຮັກສາພັນສັດປ່າຂອງທ່ານກ່ຽວກັບວິທີທີ່ທ່ານສາມາດໃຫ້ການຊ່ວຍເຫຼືອ ຖ້າພະນັກງານອົງການ FWS ຖືກມອບໝາຍຊົ່ວຄາວໃຫ້ເຮັດວຽກກ່ຽວກັບການຕອບໂຕ້ເຫດນ້ຳມັນຮົ່ວໄຫຼ. ທ່ານອາດຈະຕິດຕໍ່ຫາເຂດຮັກສາພັນສັດປ່າທີ່ຕັ້ງຢູ່ລຽບແຄມຊາຍຝັ່ງທະເລ ແລະ ໂອ້ລົມກ່ຽວກັບຄວາມຕ້ອງການກັບທາງຜູ້ປະສານງານດ້ານອາສາສະໝັກຂອງເຂົາເຈົ້າ.